# ບົດຮຽນໂຮງຮຽນວັນອາທິດ

**ວັນອາທິດ ທີ 17 ມັງກອນ 2010 (1-17-2010)**

## ການຕໍ່ສູ້ກັບຄວາມບໍ່ເປັນທັມ

**ຂໍ້ພຣະຄັມພີໃນບົດຮຽນ:** ປັນຍາຈານ 3:16-17; 4:1; 8:2-13

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ

ສ່ວນຫຼາຍແລ້ວຊີວິດເຕັມດ້ວຍຄວາມບໍ່ຍຸດຕິທັມ. ບົດຮຽນນີ້ສາມາດຊ່ວຍທ່ານສຳຣວດການໂຕ້ຕອບຕໍ່ຄວາມບໍ່ຍຸດຕິທັມໃນກຸ່ມຂອງທ່ານແລະກະຕຸ້ນທ່ານໃຫ້ກະທຳການໂດຍພຣະຄຸນແລະທ່ຽງທັມໃນຊີວິດປະຈຳວັນຂອງທ່ານ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບປະສົບການແລະການໂຕ້ຕອບຂອງພວກທີ່ເຊື່ອທີ່ມີຕໍ່ຄົນທີ່ບໍ່ທ່ຽງທັມຊຶ່ງປະຕິບັດຕໍ່ຊຶ່ງກັນແລະກັນ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຄົນທີ່ປະສົບການກັບການກົດຂີ່ກໍກາຍເປັນຜູ້ກົດຂີ່; ດັ່ງນັ້ນ, ພວກເຮົາຕ້ອງເຕືອນພວກເຮົາເອງໃນຄວາມຈຳເປັນທີ່ຕ້ອງສະແດງອອກເຖິງພຣະຄຸນແລະການອະພັຍໂທດໃນການດຳຣົງຊີວິດຂອງພວກເຮົາແຕ່ລະວັນ. ຄຣິສຕະຈັກທຸກໜ່ວຍຄວນຈະເປັນນາຍໜ້າແຫ່ງຄວາມຫວັງແລະຄວາມທ່ຽງທັມໃນຄຸ້ມເຂດທ້ອງຖິ່ນຂອງພວກເຂົາແລະໃນໂລກ.

ທ່ານກຳລັງຈະຈ່າຍເງິນຢູ່ໃນແຖວດ່ວນຊຶ່ງຈຳກັດຂອງໃຫ້ພຽງສິບຊິ້ນ. ຜູ້ທີ່ຢູ່ຕໍ່ໜ້າທ່ານມີຂອງຢ່າງໜ້ອຍປະມານສິບເຈັດຊິ້ນ, ບາງທີກໍອາດຈະຫຼາຍກວ່ານັ້ນທີ່ເຊື່ອງຢູ່ກ້ອງຖົງອາຫານໝາ. ທ່ານກໍຢືນຢູ່ທີ່ນັ້ນ, ອອກຮ້ອນສຸດຂີດ, ແລະກໍກຳລັງເວົ້າກັບຕົວເອງວ່ານີ້ມັນບໍ່ທ່ຽງທັມຈັກໜ້ອຍເລີຍ. ຂນະທີ່ສິ່ງນັ້ນເຮັດໃຫ້ຂຸ້ນເຄືອງຢູ່ນັ້ນ, ນີ້ຫຼືຄືສິ່ງທີ່ພຣະຄັມພີກ່າວເຖິງເຣື່ອງຄວາມບໍ່ທ່ຽງທັມ? ເມື່ອຖືກພວກເຮົາ. ຄວາມບໍ່ທ່ຽງທັມປາກົດຂຶ້ນຢ່າງກະທັນຫັນໃນຂອບເຂດຂອງຄວາມຄິດວ່າສເມີພາບຂອງພວກເຮົາເອງ; ເປັນແນວໃດເມື່ອເຫັນຄົນອື່ນກຳລັງຕົກຢູ່ໃນການກົດຂີ່ຂົ່ມເຫັງຢ່າງບໍ່ທ່ຽງທັມ?

ບົດຮຽນນີ້ແມ່ນກ່ຽວກັບພວກເຮົາທີ່ເປັນຄຣິສຕຽນຄວນຈະໂຕ້ຕອບຢ່າງໃດຕໍ່ຄວາມບໍ່ເປັນທັມຕ່າງໆທີ່ຄົນອື່ນປະສົບພົບພໍ້ແລະແມ່ນຫຍັງຄືຂັ້ນຕອນຂອງພຣະຄຸນທີ່ພວກເຮົາສາມາດໃຊ້ເພື່ອນຳຄວາມຫວັງ ແລະຄວາມທ່ຽງທັມມາສູ່ໂລກທີ່ອ້ອມຮອບພວກເຮົາ.

## <u>ສຶກສາພຣະຄັມພີ</u>

### 1. <u>ສະຖານທີ່ຂອງຄວາມບໍ່ເປັນທັມ</u> (ປັນຍາຈານ 3:16-17)

ໂຊໂລໂມນໄຈ້ແຍກສະຖານທີ່ຂອງກົດໝາຍວ່າ **ສະຖານທີ່ຂອງຄວາມຍຸດຕິທັມແລະຄວາມຊອບທັມ**. ແຕ່ວ່າ, **ໄຕ້ດວງຕາເວັນ**ອັນນີ້ມັນບໍ່ເປັນຈິງສເມີໄປ. ພວກເຮົາພົບຄວາມບໍ່ທ່ຽງທັມໃນບ່ອນທີ່ພວກເຮົາຫວັງຈະພົບຄວາມ

ທ່ຽງທັມ. ໃນສານຕັດສິນກໍເຕັມໄປດ້ວຍມະນຸດທີ່ເປັນຄົນບາບ. ບາງຄັ້ງພວກຕົວແທນເຫຼົ່ານັ້ນກໍໄດ້ເຮັດຜິດພາດໂດຍບໍ່ເຈດຕະນາແທ້, ດັ່ງເຊັ່ນການເກັບກຳຮັກສາຫຼັກຖານ, ການນຳໄປສູ່ການຕັດສິນຄວາມທີ່ຜິດ. ມີໜ້ອຍທີ່ສຸດ, ບາງກໍຣະນີກໍໜ້າຫວາດກົວ, ຜູ້ບໍຣິຫານຄວາມທ່ຽງທັມກໍສແວງຫາຄວາມອາຄາດບາດໝາງສ່ວນຕົວແທນທີ່ຈະຕິດຕາມໂຄງການສຳລັບຄວາມຈິງ.

ຫຼາຍຄົນມີຈິນຕະນາການຢາກຢູ່ໂລກທີ່ຄວາມຜິດທຸກຢ່າງໄດ້ຮັບໂທດໂດຍກະທັນຫັນ, ຢາກຢູ່ໂລກທີ່ພວກຂັບຣົດທີ່ບໍ່ຍ້ານອັນຕລາຍທຸກຄົນໃຫ້ໄດ້ໃບປັບໄໝ. ອັນນີ້ເປັນໂລກທີ່ໜ້າຢູ່ຫຼືບໍ່? ຖ້າທ່ານຫາກດຳເນີນຊີວິດໂດຍບໍ່ຜິດຈັກຢ່າງເທົ່ານັ້ນຈຶ່ງຈະສາມາດຢູ່ໄດ້. ພວກເຮົາຄວນສຳນຶກອອກວ່າພວກເຮົາບໍ່ໄດ້ປະຕິບັດຕໍ່ເພື່ອນມະນຸດດ້ວຍກັນຢ່າງເທົ່າທີ່ຄວນແລະເຮັດຢ່າງທ່ຽງທັມຕໍ່ຊຶ່ງກັນແລະກັນ.

ຄວາມບໍ່ເປັນທັມນີ້ແນ່ນອນມັນກໍມີຣະດູການຂອງມັນ, ບາງອັນກໍປາກົດວ່າມັນຍາວນານເຫຼືອເກີນ. ໂຊໂລໂມນຮັບຮູ້ວ່າຊີວິດນີ້ປະກອບຂຶ້ນດ້ວຍຄວາມແຕກຕ່າງກັນແລະການຄ້າຍຄືກັນຂອງບັນຫາຊີວິດ. ມີ**ເວລາສຳລັບທຸກເຣື່ອງຣາວແລະທຸກໆການງານ**. ກິຈການຂອງພຣະເຈົ້າແມ່ນກະຈ່າງແຈ້ງແລ້ວວ່າຟອງຄົ້ນຈະໝູນກັບຢ່າງແນ່ນອນແລະພຣະອົງຈະ**ພິພາກສາຄົນຊອບທັມແລະຄົນອະທັມ**.

## 2. <u>ອຳນາດແຫ່ງການກົດຂີ່ຂົ່ມເຫັງ</u> (ປັນຍາຈານ 4:1)

ເຫດຜົນອັນນຶ່ງທີ່ບາງຄົນຂາດຄວາມເຊື່ອໃນພຣະເຈົ້າກໍເພາະວ່າພວກເຂົາໄດ້ສັງເກດເຫັນການກົດຂີ່ຂົ່ມເຫັງທຸກໆແບບທີ່ເກີດຂຶ້ນພາຍໃຕ້ດວງຕາເວັນນີ້. ເຫດຜົນອັນນຶ່ງທີ່ຜູ້ທີ່ເຊື່ອຄວນຈະເຮັດວຽກກ່ຽວກັບກົດໝາຍນັ້ນກໍຄືຈະໄດ້ສະແດງຄວາມດີຂອງພຣະເຈົ້າແລະເຮັດໃຫ້ມີຄວາມສາມາດເຊື່ອໄດ້ແກ່ພວກທີ່ຖືກກົດຂີ່ຂົ່ມເຫັງ. ເມື່ອພວກເຮົາເຮັດວຽກສຳລັບຝ່າຍກົດໝາຍ, ພວກເຮົາຄວນເຮັດດ້ວຍມີແນວຄິດໃນການກ່າວປະກາດແລະແບ່ງປັນຂ່າວປະເສີດກ່ຽວກັບພຣະຄຣິດ.

### ການເລົ້າໂລມ

ຄຳວ່າ*ເລົ້າໂລມ*ປາກົດໃນພຣະທັມປັນຍາຈານ 4:1 ໃນຮູບແບບທີ່ເນັ້ນຢ່າງແຂງແຮງໃນທາງລົບ. ດ້ວຍຄວາມຮູ້ສຶກຕໍ່ການກົດຂີ່ຂົ່ມເຫັງ,ໂຊໂລໂມນຈຶ່ງໄດ້ກ່າວເຖິງສອງເທື່ອ, "ບໍ່ມີຜູ້ໃດເລົ້າໂລມພວກເຂົາ" ເລົ້າໂລມຍັງມີຄວາມໝາຍໃນພາສາເຮັບເຣີວ່າ"ເຮັດໃຫ້ສະບາຍໃຈ "ຫຼື"ຜ່ອນຄາຍລົງ" ໃນພຣະທັມ ເອຊາຢາ 40:1 ພຣະເຈົ້າເປັນພຣະຜູ້ເລົ້າໂລມສຳລັບໄພ່ພົນຂອງພຣະອົງ, ໂດຍການໃຊ້ຄຳສັບດຽວກັນໃນພາສາເຮັບເຣີ. ການເລົ້າໂລມຄົນອື່ນແມ່ນຕ້ອງໃຫ້ມີຄຸນລົມບັດທາງສິນທັມ.

### 5 ທາງທີ່ທ່ານສາມາດທຳງານໃນຝ່າຍກົດໝາຍເພື່ອເດັກທີ່ຍັງບໍ່ເກີດເທື່ອ

- ເປີດບ້ານຂອງທ່ານຕ້ອນຮັບຜູ້ຍິງທີ່ຕັ້ງຄັນຫຼື"ເດັກທີ່ເຂົາບໍ່ຕ້ອງການ."
- ກາຍເປັນຜູ້ຮູ້ລາຍລະອຽດຢ່າງແຈ່ມແຈ້ງໃນເຣື່ອງການແທ້ງລູກ.
- ຂຽນຈົດໝາຍເຖິງຜູ້ຈັດພິມໜັງສືພິມໃນທ້ອງຖິ່ນຂອງທ່ານ.
- ຂຽນຈົດໝາຍເຖິງຕົວແທນຣັຖບານ(ທ້ອງຖິ່ນ, ຣັດ, ປະເທດ).
- ອະທິຖານທຸກວັນສຳລັບຜູ້ຮັບໃຊ້ຂອງອົງການຮັກຊີວິດພ້ອມທັງແມ່ແລະເດັກທີ່ຮັບເຄາະ.

ມີມະນຸດຢ່າງຫຼວງຫຼາຍໃນໂລກນີ້ໄດ້ຕົກຢູ່ໃນການກົດຂີ່ຂົ່ມເຫັງ. ຂນະທີ່ອຳນາດເປັນຂອງພວກທີ່ກົດຂີ່ຂົ່ມເຫັງພວກເຂົາ, ພວກເຂົາກໍບໍ່ສາມາດປ້ອງກັນຕົວພວກເຂົາເອງໄດ້. ທັງພຣະຄັມພີພາກພຣະສັນຍາເກົ່າແລະພຣະສັນຍາໃໝ່

ເນັ້ນໃນການປະຕິບັດຕໍ່ສັງຄົມ, ເຊັ່ນພວກເດັກກຳພ້າແລະພວກແມ່ໝາຍ, ດ້ວຍຄວາມທ່ຽງທັມ(ພຣະບັນຍັດສອງ 27:19; ຢາໂກໂບ 1:27).

ໃນສັງຄົມປັດຈຸບັນນີ້, ຫຼາຍຄົນຍັງຕົກຢູ່ໃນການກົດຂີ່ຂົ່ມເຫັງແຕ່ວ່າບໍ່ມີຜູ້ໃດສຳຄັນຫຼາຍກວ່າພວກຍັງບໍ່ທັນເກີດ. ພວກເດັກທີ່ຍັງຢູ່ໃນທ້ອງແມ່ນກຸ່ມທີ່ມີກົດໝາຍປ້ອງກັນໜ້ອຍກ່ວາພວກເດັກທີ່ເກີດແລ້ວ. ແລະມັນໜ້າສົນໃຈບໍ່ທີ່ທຸກຄົນເຫັນຊອບໃນເຣື່ອງການແທ້ງເມື່ອລູກໄດ້ອອກມາແລ້ວ? ການກົດຂີ່ຂົ່ມເຫັງມີຫຼາຍຮູບແບບທີ່ເກີດຂຶ້ນໃນໂລກປັດຈຸບັນນີ້, ຊຶ່ງລວມທັງທຸກທົນທາງຈາກພວກຜູ້ເຖົ້າທີ່ຖືກທຳຮ້າຍເຖິງການຫາປໂຍດສ່ວນຕົວທາງເພດກັບເດັກນ້ອຍແລະຄຳສັ່ງໃຫ້ທຳການແທ້ງລູກ. ໄພ່ພົນຂອງພຣະເຈົ້າຄວນຈະເຮັດວຽກເພື່ອຜ່ອນຄາຍລົງແລະເຮັດໃຫ້ພວກຖືກເຄາະຮ້າຍຈາກການກົດຂີ່ຂົ່ມເຫັງໄດ້ຖືກປົດປ່ອຍໃຫ້ມີເສຣີພາບ.

## 3. ຫຼັກການຂອງການປະທ້ວງ (ປັນຍາຈານ 8:2-9)

ຄວາມບໍ່ເປັນທັມແລະການກົດຂີ່ຂົ່ມເຫັງທີ່ກຳລັງປາກົດໃນໂລກນີ້ ນຳຄວາມໜັກໃຈໃຫ້ແກ່ພວກທີ່ເຊື່ອ. ບັນຫາຂອງມະນຸດຊາດມັນໜັກສຳລັບພວກທີ່ມອງເຫັນການແຜ່ຂຍາຍຂອງບາບເຫຼົ່ານັ້ນ. ຂນະທີ່ຜົນມັນອອກມາກໍບໍ່ເຄີຍຮັບປະກັນ, ໄພ່ພົນຂອງພຣະເຈົ້າຄວນຈະຊອກຫາຫຼັກການອັນເໝາະສົມໃນການປະທ້ວງຕໍ່ຄວາມບໍ່ເປັນທັມ. ຫົວໃຈທີ່ສລາດຮູ້ຈັກເວລາທີ່ຖືກຕ້ອງແລະຫຼັກການອັນຖືກຕ້ອງທີ່ຈະປະນາມຄວາມຊົ່ວຮ້າຍຂອງສັງຄົມ.

ພວກເຮົາຕ້ອງນັບຖືຄຳສັ່ງຂອງກະສັດແລະເຊື່ອຟັງກົດໝາຍຂອງບ້ານເມືອງ, ຍົກເວັ້ນເຣື່ອງທີ່ຈະລະເມີດກົດບັນຍັດຂອງພຣະເຈົ້າ. ພວກເຮົາມີຄວາມສງົບ, ມີວິທີການຖືກຕ້ອງຕາມກົດໝາຍໃນການປະທ້ວງຕໍ່ການປະຕິບັດທີ່ບໍ່ສເມີພາບໃນສັງຄົມ. ພວກທີ່ເຊື່ອຄວນເຮັດໃຫ້ພວກເຂົາເອງເກີດຜົນປໂຍດຕໍ່ທຸກຄົນ, ເລີ້ມຕົ້ນກັບການໃຊ້ສິດລົງຄະແນນສຽງເລືອກຕັ້ງ. ອີງການຖແລງຂ່າວຕ່າງໆເປັນບ່ອນທີ່ໃຫ້ໂອກາດເປີດໂສມໜ້າການບໍ່ເທົ່າທຽມກັນຂອງສັງຄົມ. ກົດໝາຍຂອງສະຫະຣັດອະເມຣິກາຮັບປະກັນສິດເສຣີພາບຂອງພວກເຮົາທີ່ເປັນພົລເມືອງໃຫ້ຕໍ່ລອງກັບຣັຖບານໃຫ້ແກ້ໄຂຂໍ້ຂ້ອງໃຈຕ່າງໆ.

ເມື່ອໂຊໂລໂມນໄດ້ເຕືອນພວກນັກອ່ານຂອງລາວໂດຍເວົ້າວ່າ, ຢ່າຈົບຫາຍຍ້ອນຂອງບໍ່ມີຄ່າ, ພວກເຮົາສາມາດເວົ້າຢ່າງປອດພັຍດັ່ງນີ້ກໍໄດ້ໃນທາງກົງກັນຂ້າມກໍຖືກເໝືອນກັນ. ພວກເຮົາຄວນສືບຕໍ່ໃນວຽກງານທີ່ມີຄ່າອັນຖືກຕ້ອງ. ພວກເຮົາຕ້ອງຄິດເຖິງວິນລຽມ ວຽວເບີຟອດສ໌, ທີ່ສະແດງໜັງເຣື່ອງພຣະຄຸນພຣະເຈົ້າ, ແລະການອຸທິດຕົນຢ່າງບໍ່ຮູ້ອິດເມື່ອຍຕໍ່ພວກຂ້າທາດ. ຄວາມບໍ່ເປັນທັມນີ້ຕາມປົກກະຕິແລ້ວມັນສືບຕໍ່ເນື່ອງມາຢ່າງໝັ້ນຄົງແລະພວກທີ່ຢາກລົບລ້າງມັນຕ້ອງຕຽມພ້ອມສູ້ເປັນເວລາຍາວນານ.

ພວກເຮົາກໍບໍ່ມີຄຳຮັບປະກັນວ່າຈະສຳເຣັດຜົນໃນວຽກງານໃນເຣື່ອງເປັນທັມນີ້. ຄວາມແນ່ນອນໃນຄຳສັນຍາທີ່ມອບໃຫ້ແກ່ພວກທີ່ມີຄວາມເຊື່ອນັ້ນແມ່ນສິ່ງທີ່ຈະເກີດຂຶ້ນຕາມພາຍຫຼັງ, ບໍ່ແມ່ນໃນທີ່ນີ້ແລະດຽວນີ້. ບໍ່ມີຜູ້ໃດຮູ້ຈັກວ່າອັນໃດຈະເກີດຂຶ້ນ, ຄືກັນກັບບໍ່ມີໃພມີອຳນາດເໜືອກວ່າລົມຫຼືຄວບຄຸມມັນ. ລົມແຫ່ງທຳນຽມປະເພນີແລະທາງສົນທັມປ່ຽນແປງພັດຂ້າມຊີວິດຂອງພວກທີ່ມີຄວາມເຊື່ອແລະຜູ້ປົກຄອງບາງຄົນອາດຈະຝຶກຊ້ອມໃຊ້ອຳນາດເພື່ອທຳຮ້າຍຕໍ່ຫຼາຍໆຄົນທີ່ຢູ່ໃຕ້ອຳນາດຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ພວກເຮົາຕ້ອງອົດທົນປະເຊີນໜ້າກັບຄວາມບໍ່ເປັນທັມໃນທາງທີ່ເໝາະສົມແລະໃນທາງທີ່ຖືກຕ້ອງຕາມກົດໝາຍ, ໂດຍໃຫ້ເຂົ້າໃຈວ່າມັນບໍ່ມີຫຍັງຮັບປະກັນແຕ່ວ່າມັນອາດຈະມີການປ່ຽນແປງເກີດຂຶ້ນ.

## 4. ການທັບກັບຄືນທີ່ຈະມີໃນພາຍໜ້າ (ປັນຍາຈານ 8:10-13)

ບັນຫາທີ່ກໍາລັງເກີດຂຶ້ນມັນບໍ່ຖືກກັບຄວາມຕັ້ງໃຈເອົາໄວ້ສເມີໄປຢ່າງແນ່ນອນເບິ່ງຄືວ່າມັນບໍ່ເປັນທັມ. ການສິ່ງສະການຂອງພວກຄົນທີ່ບໍ່ເຊື່ອໃນພຣະເຈົ້າສາມາດເປັນຕົວຢ່າງໃນທີ່ນີ້. ໂຊໂລໂມນໄດ້ເວົ້າວ່າ, ຄົນຊົ່ວຮ້າຍ, ໄດ້ຮັບຄໍາຍົກຍ້ອງໃນເມືອງດຽວກັນກັບບ່ອນທີ່ເຂົາໄດ້ຕັດສິນໃຈເຮັດຄວາມຊົ່ວຮ້າຍ. ຢ່າຕັດສິນຊີວິດໂດຍໃຊ້ງານສິ່ງສະການເປັນເຄື່ອງວັດແທກ. ຫຼາຍປີຜ່ານມາແລ້ວ, ຂ້າພະເຈົ້າໄດ້ໄປຮ່ວມງານສິ່ງສະການຂອງຄົນທີ່ຈິງຈັງກັບພຣະເຈົ້າຜູ້ນຶ່ງທີ່ມີຊີວິດຍືນນານ. ຈໍານວນຄົນທີ່ໄປຮ່ວມກໍບໍ່ຫຼາຍ, ບໍ່ແມ່ນເພາະວ່າຄົນນັ້ນບໍ່ມີຄຸນຄ່າໃນການສັຣເສີນ, ແຕ່ກໍເພາະວ່າພວກເຂົາມີອາຍຸຍືນກວ່າພວກທີ່ໄດ້ຮູ້ຈັກກັບພວກເຂົາ.

ຫຼາຍຄົນມີບັນຫາກັບເວລາຂອງການຄາດຄະເນກັບຄວາມບໍ່ເປັນທັມແລະຄໍາສັນຍາຊົ່ວຮ້າຍໃນພຣະທັມຂອງພຣະເຈົ້າ. ທີ່ຖືກຮ້ອງວ່າບັນຫາຂອງຄວາມຊົ່ວຮ້າຍທີ່ບໍ່ເປັນຈິງ "ເປັນຫຍັງພຣະເຈົ້າຈຶ່ງບໍ່ຈັດການກັບຄວາມຊົ່ວຮ້າຍ? "ແຕ່ວ່າ" ເປັນຫຍັງພຣະເຈົ້າຈຶ່ງບໍ່ຈັດການກັບມັນດຽວນີ້? ໂຊໂລໂມນໄດ້ສັງເກດເຫັນວ່າການຕັດສິນຢ່າງຊາວໂລກຕໍ່ການປະພຶດທີ່ຊົ່ວຮ້າຍມັນບໍ່ໄດ້ເກີດຂຶ້ນຢ່າງວ່ອງໄວ ແລະຜົນຂອງມັນເຮັດໃຫ້ຫຼາຍຄົນເພີ້ມຄວາມປາຖນາຫາຄວາມຊົ່ວຮ້າຍ. ຢ່າງໃດກໍຕາມ, ພວກອະທັມຈະຖືກພິພາກສາແລະພວກຊອບທັມຈະຢູ່ພິສູດໃຫ້ໂລກເຫັນ. ມັນຈະເປັນໄປຢ່າງດີກັບພວກທີ່ຍໍາເກງພຣະເຈົ້າແລະບໍ່ເປັນໄປໃນທາງດີສໍາລັບພວກຊົ່ວຮ້າຍ.

ຄວາມໝັ້ນໃຈຂອງໂຊໂລໂມນໃນຄວາມເປັນທັມທີ່ຍິ່ງໃຫຍ່ບໍ່ແມ່ນຂຶ້ນກັບຫຼັກຖານທີ່ໄດ້ສັງເກດເຫັນ. ແຕ່ຂຶ້ນກັບສິ່ງທີ່ພວກເຮົາໄດ້ເຫັນກັບຕາໃນໂລກນີ້, ພວກເຮົາອາດຈະໝົດຫວັງຕໍ່ຄວາມເປັນທັມ; ສິ່ງທີ່ພວກເຮົາເຫັນຜ່ານຄວາມເຊື່ອຮັບປະກັນວ່າພຣະເຈົ້າຈະເປັນຝ່າຍຖືກຕໍ່ທຸກສິ່ງທີ່ຜິດໃນຊີວິດນີ້.

## <u>ບົດຮຽນຊີວິດ</u>

ນຶ່ງໃນຄວາມລຶກລັບຂອງຊີວິດແມ່ນສິ່ງບໍ່ດີເກີດຂຶ້ນກັບຄົນທີ່ເຄັ່ງຄັດໃນພຣະເຈົ້າແລະສິ່ງດີກໍເກີດມີສໍາລັບຄົນບໍ່ດີ. ໃນກໍຣະນີແນວນີ້, ຄໍາຖາມທີ່ດີທີ່ສຸດບໍ່ແມ່ນ"ເປັນດ້ວຍເຫດໃດ" ແຕ່ວ່າ "ແມ່ນຫຍັງດຽວນີ້?" ກຸນແຈແມ່ນການຕັດສິນໃຈວ່າພຣະເຈົ້າຕ້ອງການໃຫ້ທ່ານໂຕ້ຕອບຢ່າງໃດຕໍ່ຄວາມບໍ່ເປັນທັມ.

ເມື່ອພວກເຮົາປະເຊີນກັບຄວາມບໍ່ເປັນທັມ, ຈະເປັນປະສົບການຂອງພວກເຮົາເອງແລະຂອງຄົນອື່ນ, ພວກເຮົາຄວນຈະເຮັດຢ່າງໃດ? ພວກເຮົາຈະໂຕ້ຕອບແນວໃດໃນທ່າທີຂອງການຊົດຊ່ວຍໃຫ້ຫວິດພົ້ນ?

- ເວົ້າອອກມາເພື່ອພວກທີ່ບໍ່ມີສຽງໃນສັງຄົມ, ຄືພວກທີ່ຢູ່ທັງສອງສົ້ນຂອງຊີວິດ, ພວກເດັກນ້ອຍແລະພວກຜູ້ເຖົ້າຕ້ອງການຄວາມຊ່ວຍເຫຼືອຂອງພວກເຮົາ.
- ອາສາສມັກເວລາຂອງທ່ານໃຫ້ກັບອົງການທີ່ເຮັດວຽກເພື່ອເດັກທີ່ຍັງຢູ່ໃນທ້ອງແມ່ . ອົງການເຫຼົ່ານີ້ຕ້ອງການຄົນເຮັດວຽກໃນຫ້ອງການບໍຣິຫານຢູ່ສເມີ.
- ເຮັດວຽກເພື່ອປ່ຽນແປງພາຍໃນລະບົບການເມືອງແລະພາຍໃນຫຼັກການທີ່ເໝາະສົມຂອງການປະທ້ວງ. ຕິດຕໍ່ພົວພັນກັບພວກນັກອອກກົດໝາຍເມື່ອມີການອອກລ່າງກົດໝາຍກ່ຽວກັບການຊອກຫາທາງປົກປ້ອງພວກທີ່ຖືກກົດຂີ່ຂົ່ມເຫັງ.
- ຍິນມີເຂົ້າສນັບສນຸນຕໍ່ພວກທີ່ຖືກຈາກຄວາມບໍ່ເປັນທັມ. ສິ່ງທີ່ພວກເຂົາຕ້ອງການອັນແທ້ຈິງແມ່ນ, ການຮັບປະກັນການຢືນປາກົດຄຽງຂ້າງກັບພວກເຂົາ, ບໍ່ແມ່ນການອະທິບາຍແນະນໍາ.

ຄວາມບໍ່ເປັນທັມແມ່ນພາກສ່ວນນຶ່ງຂອງຊີວິດສເມີແຕ່ວ່າພຣະຄຸນຄວນຈະເປັນສ່ວນນຶ່ງຂອງຊີວິດໂດຍທົ່ວໄປ ເຊັ່ນກັນ- ເວົ້າສະເພາະແລ້ວແມ່ນເປັນພາກສ່ວນນຶ່ງໃນຊີວິດຂອງທ່ານ. ເມື່ອທ່ານໄດ້ຮັບແລ້ວ, ຕ້ອງຢູ່ໃນພຣະຄຸນ, ແລະແບ່ງປັນພຣະຄຸນຂອງພຣະເຈົ້າ, ທ່ານສາມາດໂຕ້ຕອບຢ່າງເໝາະສົມຕໍ່ຄວາມບໍ່ເປັນທັມທີ່ຢູ່ອ້ອມຂ້າງທ່ານ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA